WANotify.org/Lao

# WA NOTIFY ເຮັດວຽກແນວໃດ

Washington Exposure Notifications (ການແຈ້ງເຕືອນຄວາມສ່ຽງ Washington) (WA Notify) ແມ່ນ ເຄື່ອງມືໃໝ່ທີ່ສຳຄັນເພື່ອຊ່ວຍຢຸດການແຜ່ເຊື້ອ COVID-19. ເໝືອນກັບ ການສວມຜ້າປິດປາກ, ໄລຍະຫ່າງ ແລະ ການໂຮມຊຸມນຸມດ້ວຍຈຳນວນເລັກນ້ອຍ, WA Notify ແມ່ນ ເຄື່ອງມືທີ່ງ່າຍໆໃນການປົກປ້ອງ ຊຸມຊົນຂອງພວກເຮົາ.

WA Notify ເຮັດວຽກຜ່ານ ສະມາດໂຟນ, ໂດຍບໍ່ໄດ້ ແບ່ງປັນ ຂໍ້ມູນສ່ວນຕົວໃດໜຶ່ງ, ເພື່ອເຕືອນ ຜູ້ໃຊ້ຫາກພວກເຂົາໄດ້ສຳຜັດກັບ COVID-19. **ມັນເປັນສ່ວນຕົວຢ່າງສິ້ນເຊີງ ແລະ ບໍ່ຮູ້ ຫລື ຕິດຕາມທ່ານແມ່ນໃຜ ຫຼື ທ່ານຈະໄປໃສ.**

ການສຶກສາພົບວ່າຜູ້ຄົນໃຊ້ ການແຈ້ງເຕືອນຄວາມສ່ຽງຫລາຍເທົ່າໃດ, ຈະມີຜົນປະໂຫຍດຫລາຍເທົ່ານັ້ນ. ຕົວແບບຂໍ້ມູນໃນລັດ Washington ສະແດງໃຫ້ເຫັນວ່າ ເຖິງວ່າ ຜູ້ໃຊ້ WA Notify ຈະມີຈຳນວນເລັກໜ້ອຍ ກໍຈະຫລຸດຜ່ອນຈຳນວນການຕິດເຊື້ອ ແລະ ການເສຍຊີວິດໄດ້.

## ເພີ່ມ WA NOTIFY ຫາ ໂທລະສັບຂອງທ່ານ

**ໃນ iPhone:**

1. ໄປທີ່ການຕັ້ງຄ່າ
2. ການແຈ້ງເຕືອນຄວາມສ່ຽງ
3. ຄລິກ "ການແຈ້ງເຕືອນຄວາມສ່ຽງ"
4. ເລືອກ ສະຫະລັດ
5. ເລືອກ Washington

**ໃນ Android:**

1. ໃນ ໂທລະສັບ Android, ໄປທີ່ Google Play Store
2. ຊອກຫາ WA Exposure Notifications (ການແຈ້ງເຕືອນຄວາມສ່ຽງ WA) ເພື່ອຊອກຫາແອັບຢ່າງງ່າຍໆ
3. ດາວໂຫຼດແອັບ Washington Exposure Notifications (ການແຈ້ງເຕືອນຄວາມສ່ຽງ Washington)

## ເມື່ອທ່ານເພີ່ມ WA NOTIFY ຫາ ໂທລະສັບຂອງທ່ານແລ້ວ

ນີ້ຄືວິທີທີ່ມັນຈະເຮັດວຽກເພື່ອຊ່ວຍປ້ອງກັນການແຜ່ເຊື້ອ COVID-19.

**1**



ເມື່ອສອງຄົນໃຊ້ WA Notify ໃນ ສະມາດໂຟນຂອງພວກເຂົາ ເຂົ້າໃກ້ກັນ, ໂທລະສັບຂອງພວກເຂົາ ແລກປ່ຽນລະຫັດແບບບໍ່ເລືອກ ໂດຍໃຊ້ Bluetooth. **ລະຫັດແມ່ນປິດລັບ, ບໍ່ມີການຕິດຕາມທີ່ຕັ້ງ ຫລື ແລກປ່ຽນ ຂໍ້ມູນສ່ວນຕົວ.**

**2**




ເມື່ອບາງຄົນໃນ Washington ມີຜົນກວດວ່າຕິດເຊື້ອໂຄວິດ ແລະ ຫ້ອງການສາທາລະນະສຸກ ຕິດຕໍ່ພວກເຂົາ, ພວກເຂົາຈະຖືກຖາມ ຫາກ ພວກເຂົາມີ WA Notify ແລະ ໃຫ້ ລະຫັດການຢືນຢັນ.

**3**



ຄົນທີ່ມີຜົນກວດວ່າມີເຊື້ອ ຈະປ້ອນເຂົ້າ ລະຫັດການຢືນຢັນເຂົ້າໃນ WA Notify. ນີ້ແມ່ນຄວາມສະໝັກໃຈ.

**4**



ຜູ້ໃດທີ່ມີ WA Notify ແລະໄດ້ເຂົ້າໃກ້ກັບ ຜູ້ໃຊ້ທີ່ມີເຊື້ອໂຄວິດໃນໄລຍະເວລາ 14 ວັນຜ່ານມາ ຈະໄດ້ຮັບການເຕືອນນິລະນາມ ວ່າ ພວກເຂົາອາດມີຄວາມສ່ຽງໃນການສຳຜັດກັບ COVID-19.

**5**




ການແຈ້ງເຕືອນມີລິ້ງໄປຍັງ ຂໍ້ມູນກ່ຽວກັບສິ່ງທີ່ຈະເຮັດຖັດໄປ ເພື່ອປ້ອງກັນທ່ານເອງ ແລະ ຄົນອື່ນ. ພວກມັນບໍ່ປະກອບ ມີ ຂໍ້ມູນສ່ວນຕົວໃດໆ ກ່ຽວກັບ ຜູ້ທີ່ກວດພົບວ່າມີເຊື້ອໂຄວິດ ຫລື ບ່ອນໃດທີ່ຄວາມສ່ຽງອາດເກີດຂຶ້ນ.